ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0044 /ອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2019

# ຂໍ້ຕົກລົງ
## ວ່າດ້ວຍ ຮັບຮອງກິດຈະການ ອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມ ຄຳສັ່ງ ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນ ເພື່ອຮັບຮອງກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 2 ກິດຈະການ ອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ**

ກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ໃນກິດຈະການອຸດສາຫະກຳ ແລະ ການຄ້າ ແມ່ນກິດຈະການ ທີ່ມີຄວາມຈຳເປັນຕ້ອງຄຸ້ມຄອງທາງດ້ານເຕັກນິກວິຊາການ ຫຼື ມີເງື່ອນໄຂສະເພາະ ໃນການດຳເນີນທຸລະກິດດັ່ງກ່າວ ໂດຍປະກອບມີ ກິດຈະການ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ການຄ້າພາຍໃນ, ການນຳເຂົ້າ ແລະ ສົ່ງອອກ.

**ມາດຕາ 3 ຕາຕະລາງ ລາຍການກິດຈະການ ອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ**

ຕາຕະລາງ ກິດຈະການ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ໃນກິດຈະການອຸດສາຫະກຳ ແລະ ການຄ້າ ແມ່ນອີງຕາມລະຫັດສາລະບານ ການຈັດແບ່ງຂະແໜງເສດຖະກິດ ຂອງ ສປປ ລາວ (LSIC) ໂດຍ ແບ່ງເປັນ 3 ຕາຕະລາງ ຄື: 1). ຕາຕະລາງ ກິດຈະການ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ; 2). ຕາຕະລາງ ກິດຈະການ ການຄ້າພາຍໃນ ແລະ 3). ຕາຕະລາງ ກິດຈະການ ການນຳເຂົ້າ ແລະ ສົ່ງອອກ ໂດຍມີລາຍລະອຽດ ດັ່ງນີ້:

1. ຕາຕະລາງ ກິດຈະການ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ:

| ລະຫັດ | | | | ຄຳອະທິບາຍ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| 11 | ອຸດສາຫະກຳເຄື່ອງດື່ມ, ຍົກເວັ້ນຂະໜາດນ້ອຍແບບຄອບຄົວ | | | | | | | |
| | 110 | ອຸດສາຫະກຳເຄື່ອງດື່ມ | | | | | | |
| | | 1101 | ການກັ່ນ, ການຕົ້ມ, ປຸງແຕ່ງ ແລະ ຜະລິດເຫຼົ້າ | | | | | |
| | | | 11011 | ເຫຼົ້າທີ່ເຮັດດ້ວຍເຂົ້າ | ✓ | ✓ | | ຂະໜາດກາງ ແລະ ໃຫຍ່ ຂັ້ນສູນກາງ ຂະໜາດນ້ອຍ ຂັ້ນແຂວງ |
| | | | 11012 | ເຫຼົ້າທີ່ເຮັດດ້ວຍມັນຕົ້ນ | ✓ | ✓ | | |
| | | | 11013 | ເຫຼົ້າໄຫ (ເຮັດດ້ວຍເຂົ້າເປືອກ) | ✓ | ✓ | | |
| | | | 11014 | ເຫຼົ້າໝາກໄມ້ປະສົມ | ✓ | ✓ | | |
| | | | 11019 | ການກັ່ນ, ການຕົ້ມ, ປຸງແຕ່ງ ແລະ ຜະລິດເຫຼົ້າອື່ນໆ ທີ່ບໍ່ທັນຈັດເຂົ້າບ່ອນໃດ | ✓ | ✓ | | |
| | | 1102 | 11020 | ການປຸງແຕ່ງວາຍ | ✓ | ✓ | | |
| | | 1103 | ການຜະລິດເຄື່ອງດື່ມຈາກເຂົ້າມ່າລ (ເຂົ້າເບູ) | | | | | |
| | | | 11031 | ການຜະລິດເບຍ | ✓ | | | |
| | | | 11039 | ການຜະລິດເຄື່ອງດື່ມຈາກເຂົ້າມ່າລ (ເຂົ້າເບູ) ອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ | ✓ | | | |
| 12 | ການຜະລິດ ຜະລິດຕະພັນຢາສູບ | | | | | | | |
| | 120 | ການຜະລິດ ຜະລິດຕະພັນຢາສູບ, ຍົກເວັ້ນເຕົາບົ່ມຢາ | | | | | | |
| | | 1201 | 12010 | ການຜະລິດຢາສູບ ແລະ ຊິກາ | ✓ | | | |
| | | 1209 | 12090 | ການຜະລິດ ຜະລິດຕະພັນຢາສູບອື່ນໆ ທີ່ຍັງບໍ່ຈັດເຂົ້າບ່ອນໃດ | ✓ | | | |
| 13 | ການປັ່ນຝ້າຍ, ການຕຳຜ້າ ແລະ ການຕົບແຕ່ງແຜ່ນແພສຳເລັດຮູບ | | | | | | | |
| | 131 | ການປັ່ນຝ້າຍ, ການຕຳຜ້າ ແລະ ການຕົບແຕ່ງແຜ່ນແພສຳເລັດຮູບ | | | | | | |
| | | 1313 | | ການຕົບແຕ່ງແຜ່ນແພສຳເລັດຮູບ | | | | |
| | | | 13131 | ການຟອກ | ✓ | | | |
| | | | 13132 | ການຍ້ອມ | ✓ | | | |
| | | | 13133 | ການຕົບແຕ່ງ | | ✓ | | |
| | | | 13139 | ການຕົບແຕ່ງແຜ່ນແພສຳເລັດຮູບອື່ນໆທີ່ຍັງບໍ່ທັນໄດ້ຈັດເຂົ້າບ່ອນໃດ | | ✓ | | |
| 15 | ອຸດສາຫະກຳໜັງ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ | | | | | | | |
| | 151 | ການຟອກ ແລະ ຕົບແຕ່ງໜັງສັດ; ການຜະລິດຫີບກະເປົາເດີນທາງ; ກະເປົາຫິ້ວພາຍ ແລະ ລອມ | | | | | | |
| | | 1511 | ການຟອກ ແລະ ຕົບແຕ່ງໜັງສັດ; ການຍ້ອມສີ ແລະ ຕົບແຕ່ງຂົນສັດ | | | | | |
| | | | 15111 | ການຟອກ, ການຍ້ອມ ແລະ ຕົບແຕ່ງໜັງ | ✓ | | | |

| ລະຫັດ | | | | ຄຳອະທິບາຍ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| | | | 15119 | ການຟອກ ແລະ ຕົບແຕ່ງໜັງສັດ; ການຍ້ອມສີ ແລະ ຕົບແຕ່ງຂົນສັດອື່ນໆ ທີ່ບໍ່ທັນຈັດເຂົ້າບ່ອນໃດ | ✓ | | | |
| 16 | ການຜະລິດໄມ້ແປຮູບ ແລະ ຜະລິດຕະພັນຈາກໄມ້ ແລະ ຫວາຍ, ຍົກເວັ້ນເຄື່ອງເຟີນີເຈີ, ການຜະລິດຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ | | | | | | | |
| | 161 | ການເລື່ອຍ ແລະ ກົບໄມ້ | | | | | | |
| | | 1610 | 16100 | ການເລື່ອຍ ແລະ ກົບໄມ້ | ✓ | | | |
| | 162 | ການຜະລິດ ຜະລິດຕະພັນຈາກໄມ້, ເຟືອງ ແລະ ວັດຖຸຈັກສານ | | | | | | |
| | | 1621 | 16210 | ການຜະລິດແຜ່ນເຄືອບ, ໄມ້ອັດ, ແຜ່ນກະດານ ແລະ ໄມ້ກາກຕົງ | ✓ | | | |
| | | 1622 | 16220 | ການຜະລິດໄມ້ແປຮູບສຳລັບປຸກສ້າງ ແລະ ສ່ວນປະກອບ | ✓ | | | |
| | | 1623 | 16230 | ການຜະລິດເຄື່ອງບັນຈຸທີ່ເຮັດດ້ວຍໄມ້ | ✓ | | | |
| | | 1629 | 16290 | ການຜະລິດຜະລິດຕະພັນອື່ນໆຈາກໄມ້, ການຜະລິດເຄື່ອງໃຊ້ຈາກເຟືອງ ແລະ ວັດຖຸຈັກສານ. | ✓ | | | |
| 17 | ການຜະລິດເຈັ້ຍ ແລະ ຜະລິດຕະພັນເຈັ້ຍ | | | | | | | |
| | 170 | ການຜະລິດເຈັ້ຍ ແລະ ຜະລິດຕະພັນເຈັ້ຍ | | | | | | |
| | | 1701 | 17010 | ການຜະລິດເຍື່ອເຈັ້ຍ, ເຈັ້ຍ ແລະ ເຈັ້ຍແຂງ | ✓ | | | |
| 19 | ການປະດິດຖ່ານຫີນເຜົາໄໝ້ ແລະ ຜະລິດຕະພັນນ້ຳມັນກັ່ນກອງ | | | | | | | |
| | 191 | ການປະດິດຜະລິດຕະພັນຖ່ານຫີນດ້ວຍເຕົາອົບ | | | | | | |
| | | 1910 | ການປະດິດຜະລິດຕະພັນຖ່ານຫີນດ້ວຍເຕົາອົບ | | | | | |
| | | | 19101 | ການຜະລິດ ຜະລິດຕະພັນຖ່ານຫີນຂາວ | ✓ | | | |
| | | | 19102 | ການຜະລິດ ຜະລິດຕະພັນຖ່ານຫີນ | ✓ | | | |
| | | | 19103 | ຜະລິດຕະພັນຖ່ານໄມ້ | ✓ | | | |
| | | | 19104 | ການຜະລິດຖ່ານຫີນ | ✓ | | | |
| | | | 19109 | ການຜະລິດ ຜະລິດຕະພັນຖ່ານຫີນອື່ນໆ | ✓ | | | |
| 20 | ການຜະລິດສານເຄມີ ແລະ ຜະລິດຕະພັນເຄມີ | | | | | | | |
| | 201 | ການຜະລິດສານເຄມີພື້ນຖານ, ຝຸ່ນອິທະຍາສາດ ແລະ ສ່ວນປະສົມສານໄນໂຕຣເຈນ, ປລາສຕິກ ແລະ ຢາງສັງເຄາະໃນແບບຊົງເບື້ອງຕົ້ນ | | | | | | |
| | | 2011 | ການຜະລິດສານເຄມີພື້ນຖານ | | | | | |
| | | | 20111 | ການຜະລິດອອກຊີເຈນ | ✓ | | | |

| ລະຫັດ | | | | ຄຳອະທິບາຍ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| | | | 20112 | ການຜະລິດນ້ຳກັ່ນ | ✓ | | | |
| | | | 20119 | ການຜະລິດສານເຄມີພື້ນຖານອື່ນໆ ທີ່ຍັງບໍ່ທັນຈັດເຂົ້າບ່ອນໃດ | ✓ | | | |
| | | 2012 | ການຜະລິດຝຸ່ນອິທະຍາສາດ ແລະ ສ່ວນປະສົມສານໄນໂຕຣເຈນ | | | | | |
| | | | 20121 | ການຜະລິດຝຸ່ນຈາກທຳມະຊາດ | ✓ | | | |
| | | | 20122 | ການຜະລິດປຸຍເຄມີ | ✓ | | | |
| | | | 20129 | ການຜະລິດຝຸ່ນອິທະຍາສາດ ແລະ ສ່ວນປະສົມສານໄນໂຕຣເຈນອື່ນໆ ທີ່ຍັງບໍ່ໄດ້ຈັດເຂົ້າບ່ອນໃດ | ✓ | | | |
| | | 2013 | 20130 | ການຜະລິດປລາສຕິກ ແລະ ຢາງສັງເຄາະໃນແບບຊິງເບື້ອງຕົ້ນ | ✓ | | | |
| | 202 | ການຜະລິດຜະລິດຕະພັນເຄມີອື່ນໆ | | | | | | |
| | | 2021 | 20210 | ການຜະລິດຢາຂ້າແມງໄມ້ ແລະ ຜະລິດຕະພັນເຄມີອື່ນໆຮັບໃຊ້ການກະສິກຳ | ✓ | | | |
| | | 2022 | ການຜະລິດນ້ຳສີ, ນ້ຳມັນຄັດເງົາ ແລະ ສີເຄືອບທີ່ຄ້າຍກັນ, ນ້ຳມຶກການພິມ ແລະ ກາວຕິດ | | | | | |
| | | | 20221 | ການຜະລິດນ້ຳສີ | ✓ | | | |
| | | | 20222 | ການຜະລິດນ້ຳມັນສຳລັບທາໃຫ້ເຫຼື້ອມ | ✓ | | | |
| | | | 20229 | ການຜະລິດນ້ຳສີ, ນ້ຳມັນຄັດເງົາ ແລະ ສີເຄືອບທີ່ຄ້າຍຄືກັນ, ນ້ຳມຶກການພິມ ແລະ ກາວຕິດອື່ນໆ | ✓ | | | |
| | | 2029 | 20290 | ການຜະລິດຜະລິດຕະພັນອື່ນໆ ທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ | ✓ | | | |
| 21 | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນ ການຢາຈາກພືດ | | | | | | | |
| | 210 | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນ ການຢາຈາກພືດ | | | | | | |
| | | 2100 | | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນ ການຢາຈາກພືດ | | | | |
| | | | 21001 | ການຜະລິດຢາປົວພະຍາດ | ✓ | | | |
| | | | 21002 | ການຜະລິດຢາປ້ອງກັນພະຍາດ | ✓ | | | |

| ລະຫັດ | | | | ຄຳອະທິບາຍ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| | | | 21003 | ການຜະລິດຢາພື້ນເມືອງຈາກຜົນຜະລິດຕົ້ນໄມ້ | ✓ | | | |
| | | | 21009 | ການຜະລິດຢາ ແລະ ຜົນເຄມີອື່ນໆ | ✓ | | | |
| 22 | ການຜະລິດ ຜະລິດຕະພັນຢາງ ແລະ ປລາສຕິກ | | | | | | | |
| | 221 | ການຜະລິດ ຜະລິດຕະພັນຢາງ | | | | | | |
| | | 2211 | 22110 | ການຜະລິດຢາງລໍ້ລົດ ແລະ ຢາງໃນ, ຢາງໂອບ ແລະ ຫລໍ່ດອກຢາງຄືນລົດ | ✓ | | | |
| | | 2219 | | ການຜະລິດ ຜະລິດຕະພັນຢາງອື່ນໆ | ✓ | | | |
| | 222 | ການຜະລິດຢາງປລາສຕິກ ສໍາລັບຫຸ້ມຫໍ່ສິນຄ້າ | | | | | | |
| | | 2221 | 22210 | ການຜະລິດເຄື່ອງໃຊ້ປລາສຕິກ | ✓ | | | |
| | | 2222 | | ການຜະລິດຢາງປລາສຕິກສໍາລັບຫຸ້ມຫໍ່ສິນຄ້າ | | | | |
| | | | 22221 | ການຜະລິດຖົງປລາສຕິກ | ✓ | | | |
| | | | 22222 | ການຜະລິດກອດປລາສຕິກ | ✓ | | | |
| | | | 22229 | ການຜະລິດຢາງປລາສຕິກສໍາລັບການຫຸ້ມຫໍ່ສິນຄ້າອື່ນໆ | ✓ | | | |
| | | 2223 | ການຜະລິດ ຜະລິດຕະພັນຢາງປລາສະຕິກທີ່ສໍາເລັດຮູບ | | | | | |
| | | | 22231 | ການຜະລິດທໍ່ນໍ້າຢາງປລາສຕິກ | ✓ | | | |
| | | | 22239 | ການຜະລິດ ຜະລິດຕະພັນຢາງປລາສຕິກທີ່ສໍາເລັດຮູບອື່ນໆ | ✓ | | | |
| | | 2229 | 22290 | ການຜະລິດຜະລິດຕະພັນປລາສຕິກອື່ນໆ | ✓ | | | |
| 23 | ການຜະລິດຜະລິດຕະພັນແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ | | | | | | | |
| | 239 | ການຜະລິດຜະລິດຕະພັນແຮ່ທາດທີ່ບໍ່ແມ່ນໂລຫະຊຶ່ງບໍ່ທັນຈັດເຂົ້າບ່ອນໃດ | | | | | | |
| | | 2396 | 23960 | ການຕັດ, ຂັດ, ສີວ ແລະ ການຕົບແຕ່ງຫີນ | ✓ | | | |
| | | 2399 | ການຜະລິດຜະລິດຕະພັນແຮ່ທາດທີ່ບໍ່ແມ່ນໂລຫະອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ | | | | | |
| | | | 23991 | ການໂມ້ຫີນ | ✓ | | | |
| | | | 23999 | ການຜະລິດຜະລິດຕະພັນແຮ່ທາດທີ່ບໍ່ແມ່ນໂລຫະອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ | ✓ | | | |
| 24 | ການຜະລິດໂລຫະຂັ້ນພື້ນຖານ | | | | | | | |
| | 241 | ການຜະລິດເຫຼັກຂັ້ນພື້ນຖານ ແລະ ເຫຼັກກ້າ | | | | | | |
| | | 2410 | | ການຜະລິດເຫຼັກຂັ້ນພື້ນຖານ ແລະ ເຫຼັກກ້າ | | | | |
| | | | 24101 | ການຜະລິດເຫຼັກກ້າ | ✓ | | | |
| | | | 24109 | ການຜະລິດເຫຼັກຂັ້ນພື້ນຖານ ແລະ ເຫຼັກກ້າອື່ນໆ | ✓ | | | |

| ລະຫັດ | | | | ຄຳອະທິບາຍ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| | 242 | ການຜະລິດໂລຫະມີຄ່າຂັ້ນພື້ນຖານ ແລະ ບໍ່ແມ່ນທາດເຫຼັກອື່ນໆ | | | | | | |
| | | 2420 | 24200 | ການຜະລິດໂລຫະມີຄ່າຂັ້ນພື້ນຖານ ແລະ ບໍ່ແມ່ນທາດເຫຼັກອື່ນໆ | ✓ | | | |
| | 243 | ການຫຼອມໂລຫະ | | | | | | |
| | | 2431 | 24310 | ການຫລອມເຫຼັກ ແລະ ເຫຼັກກ້າ | ✓ | | | |
| | | 2432 | 24320 | ການຫຼອມໂລຫະທີ່ບໍ່ແມ່ນເຫຼັກ | ✓ | | | |
| 31 | ການຜະລິດເຄື່ອງເຟີນີເຈີ | | | | | | | |
| | 310 | ການຜະລິດເຄື່ອງເຟີນີເຈີ | | | | | | |
| | | 3100 | | ການຜະລິດເຄື່ອງເຟີນີເຈີ | | | | |
| | | | 31001 | ການຜະລິດເຄື່ອງເຟີນີເຈີໄມ້ | ✓ | | | |
| | | | 31002 | ການຜະລິດເຄື່ອງເຟີນີເຈີຫວາຍ | ✓ | | | |
| | | | 31003 | ການຜະລິດເຄື່ອງເຟີນີເຈີປລາສຕິກ | ✓ | | | |
| | | | 31004 | ການຜະລິດເຄື່ອງເຟີນີເຈີໂລຫະ | ✓ | | | |
| | | | 31009 | ການຜະລິດເຄື່ອງເຟີນີເຈີອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ | ✓ | | | |
| 32 | ການຜະລິດແປຮູບອື່ນໆ | | | | | | | |
| | 324 | ການຜະລິດເຄື່ອງຫຼິ້ນເກມ ແລະ ເຄື່ອງຫຼິ້ນອື່ນໆ | | | | | | |
| | | 3240 | ການຜະລິດເຄື່ອງຫຼິ້ນເກມ ແລະ ເຄື່ອງຫຼິ້ນອື່ນໆ | | | | | |
| | | | 32401 | ການຜະລິດເຄື່ອງຫຼິ້ນ | ✓ | | | |
| | | | 32409 | ການຜະລິດເຄື່ອງຫຼິ້ນເກມ ແລະ ເຄື່ອງຫຼິ້ນອື່ນໆ | ✓ | | | |
| 38 | ການເກັບຮັກສາ, ບຳບັດ ແລະ ກຳຈັດສິ່ງເສດເຫຼືອ, ເຄື່ອງມືອຳນວຍຄວາມສະດວກໃນການກູ້ຄືນ | | | | | | | |
| | 382 | ການບຳບັດ ແລະ ກຳຈັດ ສິ່ງເສດເຫຼືອ | | | | | | |
| | | 3821 | 38210 | ການບຳບັດ ແລະ ກຳຈັດ ສິ່ງເສດເຫຼືອທີ່ບໍ່ເປັນອັນຕະລາຍ | ✓ | | | |
| | 383 | ການນຳເສດວັດສະດຸມາໃຊ້ຄືນ | | | | | | |
| | | 3830 | | ການນຳເສດວັດສະດຸມາໃຊ້ຄືນ | | | | |
| | | | 38301 | ການນຳສິ່ງເສດເຫຼືອໂລຫະ ແລະ ເສດໂລຫະມາໃຊ້ຄືນ | ✓ | | | |
| | | | 38302 | ການນຳສິ່ງເສດເຫຼືອ ທີ່ບໍ່ແມ່ນໂລຫະມາໃຊ້ຄືນ | ✓ | | | |

## 2. ຕາຕະລາງ ກິດຈະການ ການຄ້າພາຍໃນ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ:

| ລະຫັດ | | | | ລາຍການກິດຈະການ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| 45 | ການຂາຍຍົກ ແລະ ຂາຍຍ່ອຍ ແລະ ສ້ອມແປງລົດຍົນ ແລະ ລົດຈັກ | | | | | | | |
| 45 | ການຂາຍຍົກ ແລະ ຂາຍຍ່ອຍ ແລະ ສ້ອມແປງລົດຍົນ ແລະ ລົດຈັກ | | | | ✓ | ✓ | | ໝາຍເຖິງ: ການຄ້າຂາຍຍົກ ແລະ ຂາຍຍ່ອຍທົ່ວໄປທັງໝົດ ສຳລັບຄົນຕ່າງປະເທດລົງທຶນ ຕາມເງື່ອນໄຂທີ່ກຳນົດ ໃນຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ໂດຍມີການແບ່ງຂັ້ນພິຈາລະນາ ຕາມທີ່ກຳນົດໃນຂໍ້ຕົກລົງດັ່ງກ່າວ |
| 46 | ການຄ້າຂາຍຍົກ, ຍົກເວັ້ນລົດຍົນ ແລະ ລົດຈັກ | | | | | | | |
| 46 | ການຄ້າຂາຍຍົກ, ຍົກເວັ້ນລົດຍົນ ແລະ ລົດຈັກ | | | | ✓ | ✓ | | ໝາຍເຖິງ: ການຄ້າຂາຍຍົກທົ່ວໄປທັງໝົດ ສຳລັບຄົນຕ່າງປະເທດລົງທຶນ ຕາມເງື່ອນໄຂ ທີ່ກຳນົດໃນຂໍ້ຕົກລົງ ວ່າດ້ວຍ ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ໂດຍມີການແບ່ງຂັ້ນພິຈາລະນາ ຕາມທີ່ກຳນົດໃນຂໍ້ຕົກລົງດັ່ງກ່າວ |
| | 466 | ການຂາຍຍົກສະເພາະອື່ນໆ | | | | | | |
| | | 4661 | ການຂາຍຍົກທາດແຂງ, ທາດແຫຼວ ແລະ ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ: | | | | | |
| | | | 46611 | ການຂາຍຍົກນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງ | ✓ | | | ໝາຍເຖິງ: ທຸລະກິດ ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ |
| | | | 46612 | ການຂາຍຍົກອາຍແກັສ | | ✓ | | ໝາຍເຖິງ: ທຸລະກິດນຳເຂົ້າ ແລະ ຈຳໜ່າຍອາຍແກັສ |
| | | | 46619 | ການຂາຍຍົກທາດແຂງ, ທາດແຫຼວ ແລະ ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ອື່ນໆ | ✓ | | | ໝາຍເຖິງ: ທຸລະກິດຈຳໜ່າຍ ນ້ຳມັນເຊື້ອໄຟ |
| 47 | ການຄ້າຂາຍຍ່ອຍ, ຍົກເວັ້ນລົດຍົນ ແລະ ລົດຈັກ | | | | | | | |
| 47 | ການຄ້າຂາຍຍ່ອຍ, ຍົກເວັ້ນລົດຍົນ ແລະ ລົດຈັກ | | | | ✓ | ✓ | | ໝາຍເຖິງ: ການຄ້າຂາຍຍ່ອຍທົ່ວໄປທັງໝົດ ສຳລັບຄົນຕ່າງປະເທດລົງທຶນ ຕາມເງື່ອນໄຂທີ່ກຳນົດ ໃນຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ໂດຍມີການແບ່ງຂັ້ນພິຈາລະນາຕາມທີ່ກຳນົດໃນຂໍ້ຕົກລົງດັ່ງກ່າວ |

| ລະຫັດ | | | | ລາຍການກິດຈະການ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| | 473 | ການຂາຍຍ່ອຍນ້ຳມັນເຊື້ອເພີງລົດຍົນໃນຮ້ານສະເພາະ | | | | | | |
| | | 4730 | ການຂາຍຍ່ອຍນ້ຳມັນເຊື້ອເພີງລົດຍົນໃນຮ້ານສະເພາະ | | | | | |
| | | | 47300 | ການຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຮ້ານສະເພາະ (ປ້ຳນ້ຳມັນ) | | ✓ | | ໝາຍເຖິງ: ທຸລະກິດ ປ້ຳນ້ຳມັນ ແລະ ຮ້ານຈຳໜ່າຍ ອາຍແກັສຫຸງຕົ້ມ |
| | 479 | ການຄ້າຍ່ອຍນອກຮ້ານຄ້າ, ນອກຮ້ານແຜງລອຍ ຫຼື ຕະຫຼາດ | | | | | | |
| | | 4791 | 47910 | ຂາຍຍ່ອຍ ໂດຍສັ່ງຜ່ານໄປສະນີ ຫຼື ທາງ ອິນເຕີເນັດ | ✓ | | | ໝາຍເຖິງ: ທຸລະກິດຂາຍຕົງ ຫຼື ຂາຍກົງ |
| | | 4799 | 47990 | ຂາຍຍ່ອຍນອກຮ້ານຄ້າ,ນອກຮ້ານແຜງລອຍ ຫຼື ຕະຫຼາດ | ✓ | | | |
| 68 | ການເຄື່ອນໄຫວດ້ານອະສັງຫາລິມະຊັບ | | | | | | | |
| | 681 | ການເຄື່ອນໄຫວດ້ານອະສັງຫາລິມະຊັບ ຊຶ່ງເປັນຂອງຕົນເອງ ຫຼື ເຊົ່າມາ | | | | | | |
| | | 6810 | ການເຄື່ອນໄຫວດ້ານອະສັງຫາລິມະຊັບ ຊຶ່ງເປັນຂອງຕົນເອງ ຫຼື ເຊົ່າມາ | | | | | |
| | | | 68101 | ການຊື້, ການຂາຍ, ການເຊົ່າ ແລະ ການດຳເນີນການ ທີ່ເປັນຂອງຕົນເອງ ຫຼື ອະສັງຫາລິມະຊັບທີ່ເຊົ່າມາ ບໍ່ແມ່ນອາຄານທີ່ຢູ່ອາໃສປະຈຳ | ✓ | ✓ | ✓ | ໝາຍເຖິງ: 1). ທຸລະກິດ ກ່ຽວກັບ ຕະຫຼາດ, ສູນການຄ້າ ແລະ ຮ້ານຊັບພະສິນຄ້າ ຕາມທີ່ກຳນົດໃນ ຂໍ້ຕົກລົງວ່າດ້ວຍຕະຫຼາດ ແລະ ຂໍ້ຕົກລົງວ່າດ້ວຍສູນການຄ້າ ແລະ ຮ້ານຊັບພະສິນຄ້າ ໂດຍມີການກຳນົດແບ່ງຂັ້ນພິຈາລະນາ ຕາມທີ່ກຳນົດ ໃນຂໍ້ຕົກລົງດັ່ງກ່າວ. |
| | | | | | ✓ | | | ໝາຍເຖິງ: 2). ທຸລະກິດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ ຕາມທີ່ກຳນົດໃນດຳລັດວ່າດ້ວຍທຸລະກິດ ນ້ຳມັນເຊື້ອໄຟ. |

## 3. ຕາຕະລາງ ກິດຈະການ ການນຳເຂົ້າ ແລະ ສົ່ງອອກ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ:

| ລະຫັດ | | | | ລາຍການກິດຈະການ | ການແບ່ງຂັ້ນພິຈາລະນາ | | | ໝາຍເຫດ |
|---|---|---|---|---|---|---|---|---|
| ພາກສ່ວນ | ໝວດ | ໝູ່ | ໝູ່ຍ່ອຍ | | ສູນກາງ | ແຂວງ | ເມືອງ | |
| 45 | ຂາຍຍົກ ແລະ ຂາຍຍ່ອຍ ແລະ ສ້ອມແປງລົດຍົນ ແລະ ລົດຈັກ | | | | | | | |
| | 451 | ການຄ້າຂາຍລົດຍົນ | | | | | | |
| | | 4510 | ການຄ້າຂາຍລົດຍົນ | | | | | |
| | | | 45101 | ການຂາຍຍົກ ແລະ ການຂາຍຍ່ອຍລົດຍົນ. ຍົກເວັ້ນລົດຈັກ ແລະ ລົດສະກູດເຕີ | ✓ | | | ໝາຍເຖິງ: ທຸລະກິດການນຳເຂົ້າ ແລະ ສົ່ງອອກ ພະຫະນະ ຕາມທີ່ກຳນົດໃນດຳລັດວ່າດ້ວຍ ທຸລະກິດຍານພາຫະນະ ແລະ ລະບຽບການທີ່ກ່ຽວຂ້ອງ. |
| | | | 45109 | ການຂາຍລົດຍົນອື່ນໆ | ✓ | | | |
| | 454 | | | ການຂາຍ, ບົວລະບັດຮັກສາ ແລະ ສ້ອມແປງລົດຈັກ, ອາໄຫລ່ ທີ່ກ່ຽວຂ້ອງ ແລະ ອຸປະກອນທີ່ຕິບແຕ່ງ | | | | |
| | | 4540 | | ການຂາຍ, ບົວລະບັດຮັກສາ ແລະ ສ້ອມແປງລົດຈັກ, ອາໄຫລ່ ທີ່ກ່ຽວຂ້ອງ ແລະ ອຸປະກອນທີ່ຕົບແຕ່ງ | | | | |
| | | | 45401 | ການຂາຍຍົກ ແລະ ການຂາຍຍ່ອຍ ລົດຈັກ ແລະ ລົດສະກູດເຕີ | ✓ | | | ໝາຍເຖິງ: ທຸລະກິດການນຳເຂົ້າ ແລະ ສົ່ງອອກ ລົດຈັກ ແລະ ລົດສະກູດເຕີ ຕາມທີ່ກຳນົດໃນດຳລັດ ວ່າດ້ວຍທຸລະກິດຍານພາຫະນະ ແລະ ລະບຽບການທີ່ກ່ຽວຂ້ອງ. |
| 46 | ການຄ້າຂາຍຍົກ, ຍົກເວັ້ນລົດຍົນ ແລະ ລົດຈັກ | | | | | | | |
| | 464 | ການຂາຍຍົກເຄື່ອງໃຊ້ຄົວເຮືອນຕ່າງໆ | | | | | | |
| | | 4642 | ການຂາຍຍົກເຄື່ອງໃຊ້ສ່ວນຕົວ | | | | | |
| | | | 46421 | ການຂາຍຍົກເຄື່ອງເພັດພອຍ | ✓ | | | ໝາຍເຖິງ: ທຸລະກິດນຳເຂົ້າ ແລະ ສົ່ງອອກ ເພັດທາຍາບ, ເພັດເຈຍລະໄນ, ແກ້ວປະເສີດ, ເຄື່ອງເງິນ, ຄຳທີ່ວໄປ, ເຄື່ອງໂລຫະ, ເຄື່ອງແກ້ວ ແລະ ວັດຖຸມີຄ່າອື່ນໆ ຍົກເວັ້ນຄຳແທ່ງທີ່ນຳໃຊ້ ເພື່ອການຊຳລະສະສາງສາກົນ. |

ກິດຈະການ ອຸດສາຫະກຳ ແລະ ການຄ້າໃດ ທີ່ບໍ່ມີໃນຕາຕະລາງໃດໜຶ່ງ ທີ່ກຳນົດໃນມາດຕານີ້ ແມ່ນ ບໍ່ໃຫ້ອອກໃບອະນຸຍາດດຳເນີນທຸລະກິດ, ໃຫ້ປະຕິບັດຕາມທີ່ກຳນົດໃນ ມາດຕາ 5 ຂອງ ຂໍ້ຕົກລົງ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ.

**ມາດຕາ 4  ການປັບປຸງ ລາຍການກິດຈະການ  ອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ**

ການປັບປຸງ ລາຍການກິດຈະການ ອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ແມ່ນ ການເພີ່ມ ຫຼື ຫຼຸດລາຍການ ທີ່ກຳນົດໃນຕາຕະລາງໃດໜຶ່ງ ໃນມາດຕາ 3 ຂອງ ຂໍ້ຕົກລົງສະບັບນີ້.

ການປັບປຸງແຕ່ລະຄັ້ງ ຕ້ອງໄດ້ຮັບການພິຈາລະນາອະນຸມັດຈາກລັດຖະມົນຕີ ຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມກອງທີ່ກ່ຽວຂ້ອງ. ໃນກໍລະນີ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕ້ອງການປັບປຸງ ແມ່ນໃຫ້ສະເໜີຜ່ານກົມກອງກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລ້ວນຳສະເໜີລັດຖະມົນຕີພິຈາລະນາ.

ມາດຕາ 5  ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ຫຼັງຈາກສິບຫ້າວັນ ນັບແຕ່ວັນພິມລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ